**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ເລກທີ 0356/ສຂລ

ນະຄອນຫຼວງວຽງຈັນ, ວັນທີ 24 ກັນຍາ 2025

## ແຈ້ງການ
## ວ່າດ້ວຍການຮັບເອົາສະມາຊິກສະມາຄົມນັກຂ່າວແຫ່ງ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍສື່ມວນຊົນ ສະບັບ ເລກທີ 019 / ສພຊ, ລົງວັນທີ 04 ພະຈິກ 2016, ມາດຕາ 27 ກ່ຽວກັບສິດ ແລະ ໜ້າທີ່ຂອງສະມາຄົມນັກຂ່າວແຫ່ງ ສປປ ລາວ;
- ອີງຕາມ ລະບຽບຂອງສະມາຄົມ ສະບັບ ເລກທີ 10 / ສຂລ, ລົງວັນທີ 17 ກຸມພາ 2015, ໂດຍສະເພາະມາດຕາ 14 ກ່ຽວກັບ ສະມາຊິກຂອງສະມາຄົມ;
- ອີງຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນຍຸກດິຈິຕອນ ແລະ ເອໄອ ເພື່ອເຮັດແນວໃດໃຫ້ນັກຂ່າວທີ່ສັງກັດ ແລະ ບໍ່ໄດ້ສັງກັດອົງການໃດໆ ມາຮ່ວມກັນສຸມໃສ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ຄະນະບໍລິຫານງານສະມາຄົມນັກຂ່າວ ແຫ່ງ ສປປ ລາວ ຂໍຖືເປັນກຽດ ແລະ ຍິນດີແຈ້ງໃຫ້ບັນດາອົງການສື່ມວນຊົນທຸກຂັ້ນ ພ້ອມດ້ວຍນັກຂ່າວສັງກັດໃນແຕ່ລະອົງການສື່ມວນຊົນ ຕະຫຼອດເຖິງນັກຂ່າວຮ່ວມງານທີ່ບໍ່ໄດ້ສັງກັດຢູ່ກັບສື່ໃດໆຮັບຊາບວ່າ ສະມາຄົມນັກຂ່າວແຫ່ງ ສປປ ລາວ ນັບແຕ່ນີ້ເປັນຕົ້ນໄປ ຈະໄດ້ດໍາເນີນການເປີດຮັບເອົາສະມາຊິກໃໝ່ເຂົ້າມາສັງກັດໃນສະມາຄົມທັງນີ້ກໍເພື່ອເຮັດໜ້າທີ່ເຕົ້າໂຮມ ແລະ ຊ່ວຍພັດທະນາຄວາມຮູ້ດ້ານວິຊາຊີບນັກຂ່າວ ແລະ ໃຫ້ຜູ້ເຮັດອາຊີບດ້ານສື່ມວນຊົນ ປະກອບສ່ວນເຂົ້າໃນການສື່ສານ, ໂຄສະນາຮັບໃຊ້ພາລະກິດປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ.

ເງື່ອນໄຂໃນການສະໝັກເປັນສະມາຊິກແມ່ນຕາມຄວາມສະໝັກໃຈ, ເຊິ່ງແຕ່ລະຄົນສາມາດເຂົ້າໄປອ່ານ ແລະ ປະກອບຟອມໄດ້, ລາຍລະອຽດໄດ້ເຊື່ອມຕໍ່ທີ່ຢູ່ນີ້: **ລົງທະບຽນເປັນສະມາຊິກສະມາຄົມນັກຂ່າວລາວ** ຫຼື ຕິດຕໍ່ກອງເລຂາສະມາຄົມໄດ້ທີ່ ໂທ: 020 54915353; 59888105.

ດັ່ງນັ້ນ, ຈຶ່ງໄດ້ອອກແຈ້ງການສະບັບນີ້ໃຫ້ຊາບທົ່ວເຖິງກັນ ແລະ ຫວັງຢ່າງຍິ່ງວ່າພວກທ່ານຈະຍິນດີເຂົ້າຮ່ວມເປັນສະມາຊິກສະມາຄົມນັກຂ່າວແຫ່ງ ສປປ ລາວ ຕາມທາງຄວນດ້ວຍ.

**ປະທານສະມາຄົມນັກຂ່າວ ແຫ່ງ ສປປ ລາວ**

ສະຫວັນຄອນ ຣາຊມຸນຕຣີ